**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ເລກທີ 1333 /ສທ

ນະຄອນຫຼວງວຽງຈັນ, ວັນທີ 16 NOV 2017

## ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍໂຮງໝໍເອກະຊົນ

ໂດຍປະຕິບັດຕາມ ມາດຕາ 23 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ ເລກທີ 151/ລບ, ລົງວັນທີ 28 ເມສາ 2014, ກະຊວງສາທາລະນະສຸກ ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍໂຮງໝໍເອກະຊົນ ດັ່ງນີ້:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1:** **ຈຸດປະສົງ:**

ຄຳແນະນຳສະບັບນີ້ ກຳນົດຫຼັກການ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການດຳເນີນກິດຈະການຂອງໂຮງໝໍເອກະຊົນ ເພື່ອໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍເອກະຊົນ ຖືກຕ້ອງຕາມນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດຖະບານ ວາງອອກ, ເພື່ອແນ່ໃສ່ເຮັດໃຫ້ການບໍລິການທາງດ້ານການແພດ ມີຄຸນນະພາບ, ມີປະສິດທິພາບ, ມີຄວາມຍຸຕິທຳ ແລະ ຮັບປະກັນ ຄວາມປອດໄພໃຫ້ແກ່ຄົນເຈັບ.

**ມາດຕາ 2:** **ນິຍາມໂຮງໝໍເອກະຊົນ:**

ໂຮງໝໍເອກະຊົນ ແມ່ນສະຖານທີ່ບໍລິການ ກວດພະຍາດ, ບົ່ງມະຕິ, ປິ່ນປົວ, ຟື້ນຟູ, ສົ່ງເສີມສຸຂະພາບ ແລະ ກັນພະຍາດ ຂອງພາກເອກະຊົນ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ, ຊຶ່ງປະກອບມີຜູ້ປະກອບວິຊາຊີບປິ່ນປົວ, ອຸປະກອນການແພດ ແລະ ຕຽງນອນສຳລັບຄົນເຈັບພັກປິ່ນປົວ ຕາມລະບຽບການ.

**ມາດຕາ 3:** **ຂອບເຂດການນຳໃຊ້ຄຳແນະນຳ:**

ຄຳແນະນຳສະບັບນີ້ ມີຂອບເຂດການນຳໃຊ້ ສຳລັບຕໍ່ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງໝໍເອກະຊົນ ທຸກປະເພດ, ລັກສະນະ ແລະ ຂັ້ນ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ລັກສະນະ, ຂະໜາດ ໂຮງໝໍເອກະຊົນ

**ມາດຕາ 4: ປະເພດໂຮງໝໍເອກະຊົນ:**

ປະເພດໂຮງໝໍເອກະຊົນ ມີ **ສອງ** ປະເພດ ດັ່ງນີ້:

1. ໂຮງໝໍເອກະຊົນລົງທຶນ ຮ້ອຍສ່ວນຮ້ອຍ(100%): ແມ່ນການລົງທຶນຂອງ ບຸກຄົນ ຫຼື ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ລວມທັງ ການຮ່ວມທຶນຂອງເອກະຊົນ ພາຍໃນ ກັບ ຕ່າງປະເທດ.
2. ໂຮງໝໍຮຸ້ນສ່ວນ ລັດ ກັບ ເອກະຊົນ: ແມ່ນການຮ່ວມທຶນ ລະຫວ່າງ ລັດຖະບານແຫ່ງ ສປປລາວ ກັບ ບຸກຄົນ ຫຼື ນິຕິບຸກຄົນ ທາງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 5: ລັກສະນະໂຮງໝໍເອກະຊົນ:**

ໂຮງໝໍເອກະຊົນ ມີ <u>**ສາມ**</u> ລັກສະນະ ດັ່ງນີ້:

1. ໂຮງໝໍທົ່ວໄປ: ແມ່ນສະຖານທີ່ບໍລິການດ້ານການປິ່ນປົວ ໂດຍປະກອບດ້ວຍຫຼາຍວິຊາການທາງການແພດ ທີ່ແຕກຕ່າງກັນ ແຕ່ຈະຕ້ອງລົງເລິກວິຊາການແພດຊ່ຽວຊານໃດໜຶ່ງ, ມີຜູ້ປະກອບວິຊາຊີບປິ່ນປົວ, ມີຕຽງ ນອນສໍາລັບຄົນເຈັບພັກປິ່ນປົວ.
2. ໂຮງໝໍສະເພາະວິຊາ: ແມ່ນສະຖານທີ່ບໍລິການປິ່ນປົວ ທີ່ເນັ້ນໃສ່ແຕ່ໝວດວິຊາການແພດ ທີ່ລົງເລິກຂະແໜງ ສະເພາະວິຊາສາຂາໃດໜຶ່ງ ທີ່ເປັນລັກສະນະຊ່ຽວຊານສະເພາະວິຊາເປັນຕົ້ນຕໍ, ມີຜູ້ປະກອບວິຊາຊີບປິ່ນປົວ, ມີຕຽງນອນສໍາລັບຄົນເຈັບພັກປິ່ນປົວ, ກໍລະນີການບໍລິການຄົນເຈັບແບບບໍ່ຕ້ອງນອນປິ່ນປົວ ອາດຈະບໍ່ມີຕຽງ ນອນພັກປິ່ນປົວກໍ່ໄດ້ ເຊັ່ນ: ທັນຕະກໍາ(ແຂ້ວ)...
3. ໂຮງໝໍການແພດພື້ນເມືອງ: ແມ່ນສະຖານທີ່ບໍລິການປິ່ນປົວ ທີ່ເນັ້ນໃສ່ວິຊາການແພດພື້ນເມືອງເປັນຕົ້ນຕໍ, ມີຜູ້ປະກອບວິຊາຊີບປິ່ນປົວ, ມີຕຽງນອນສໍາລັບຄົນເຈັບພັກປິ່ນປົວ.

**ມາດຕາ 6: ຂັ້ນໂຮງໝໍເອກະຊົນ:**

ໂຮງໝໍເອກະຊົນ ມີ <u>**ສາມ**</u> ຂັ້ນ ດັ່ງນີ້:

1. <u>ຂັ້ນ1</u>: ເປັນໂຮງໝໍຂະໜາດໃຫຍ່:
   ຕ້ອງມີບຸກຄະລາກອນທີ່ມີຄຸນນະພາບ ແລະ ອຸປະກອນການແພດ ທີ່ທັນສະໄໝ ໃນລະດັບການບໍລິການ ປິ່ນປົວຂັ້ນສູງສຸດ ຕາມມາດຕາ 18 ຂອງກົດໝາຍວ່າດ້ວຍການປິ່ນປົວ.
2. ຂັ້ນ2: ເປັນໂຮງໝໍຂະໜາດກາງ:
   ຕ້ອງມີບຸກຄະລາກອນທີ່ມີຄຸນນະພາບ ແລະ ອຸປະກອນການແພດ ທີ່ທັນສະໄໝ ໃນລະດັບການບໍລິການ ປິ່ນປົວຂັ້ນສູງ ຕາມມາດຕາ 17 ຂອງກົດໝາຍວ່າດ້ວຍການປິ່ນປົວ.
3. <u>ຂັ້ນ3</u>: ເປັນໂຮງໝໍຂະໜາດນ້ອຍ:
   ຕ້ອງມີບຸກຄະລາກອນທີ່ມີຄຸນນະພາບ ແລະ ອຸປະກອນການແພດ ຄົບຖ້ວນ ໃນລະດັບການບໍລິການປິ່ນປົວ ຂັ້ນກາງ ຕາມມາດຕາ 16 ຂອງກົດໝາຍວ່າດ້ວຍການປິ່ນປົວ. ສໍາລັບການບໍລິການປິ່ນປົວຂັ້ນກາງນີ້ແມ່ນຈະ ອະນຸຍາດໃຫ້ສ້າງຕັ້ງຢູ່ບັນດາແຂວງຕ່າງໆທີ່ມີຄວາມຈໍາເປັນໃຫ້ປະຊາຊົນມີທາງເລືອກ, ຍົກເວັ້ນໃນເຂດເທດ ສະບານຂອງບັນດາແຂວງໃຫຍ່ເຊັ່ນ: ນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ ແລະ ຈໍາປາສັກ.

## ໝວດທີ 3
## ການຈັດຕັ້ງ ແລະ ການເຄື່ອນໄຫວຂອງໂຮງໝໍເອກະຊົນ

**ມາດຕາ 7: ພາລະບົດບາດຂອງໂຮງໝໍເອກະຊົນ:**

ພາລະບົດບາດຂອງໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 7 ຂອງດຳລັດວ່າດ້ວຍໂຮງໝໍ ເອກະຊົນ.

**ມາດຕາ 8: ໜ້າທີ່ການບໍລິການຂອງໂຮງໝໍເອກະຊົນ:**

ໜ້າທີ່ການບໍລິການຂອງໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 8 ຂອງດຳລັດວ່າດ້ວຍໂຮງໝໍ ເອກະຊົນ.

**ມາດຕາ 9: ຂອບເຂດສິດຂອງໂຮງໝໍເອກະຊົນ:**

ນອກຈາກຂອບເຂດສິດຂອງໂຮງໝໍເອກະຊົນ ທີ່ກຳນົດໃນມາດຕາ 9 ຂອງດຳລັດສະບັບ 151/ລບ ແລ້ວ, ຂອບເຂດສິດຂອງໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

ກໍລະນີມີການເສຍຊີວິດຂອງຄົນເຈັບຢູ່ໂຮງໝໍຕົນ ຕ້ອງລາຍງານດ້ານວິຊາການປິ່ນປົວ ໃຫ້ ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ພາຍໃນ 24 ຊົ່ວໂມງ.

**ມາດຕາ 10: ຜູ້ບໍລິຫານຄຸ້ມຄອງໂຮງໝໍເອກະຊົນ:**

ຜູ້ບໍລິຫານຄຸ້ມຄອງໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 10 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

**ມາດຕາ 11: ການບັນຈຸພະນັກງານເຂົ້າໃນໂຮງໝໍເອກະຊົນ:**

ນອກຈາກການບັນຈຸພະນັກງານເຂົ້າເຮັດວຽກໃນໂຮງໝໍເອກະຊົນ ທີ່ກຳນົດໃນມາດຕາ 11 ຂອງດຳລັດສະບັບ 151/ລບແລ້ວ, ການບັນຈຸພະນັກງານເຂົ້າເຮັດວຽກໃນໂຮງໝໍເອກະຊົນ ຕ້ອງປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

ການນຳເອົາຜູ້ປະກອບວິຊາຊີບປິ່ນປົວ, ນັກເຕັກນິກອື່ນໆ ທີ່ເປັນຄົນຕ່າງປະເທດ ເຂົ້າມາປະຕິບັດວິຊາການ ໃນໂຮງໝໍເອກະຊົນ ອະນຸຍາດໃຫ້ບໍ່ເກີນ ຊາວ(20)ເປີເຊັນ ຂອງຈຳນວນພົນທັງໝົດ ແລະ ຜູ້ກ່ຽວຕ້ອງມີ ໃບຢັ້ງຢືນວິຊາຊີບປິ່ນປົວ ທີ່ອອກໃຫ້ໂດຍ ກະຊວງສາທາລະນະສຸກ.

**ມາດຕາ 12: ພັນທະຂອງໂຮງໝໍເອກະຊົນ:**

ພັນທະຂອງໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 12 ຂອງດຳລັດວ່າດ້ວຍໂຮງໝໍ ເອກະຊົນ.

**ມາດຕາ 13: ການນຳເຂົ້າອຸປະກອນ ແລະ ຜະລິດຕະພັນການແພດ:**

ການນຳເຂົ້າອຸປະກອນແລະຜະລິດຕະພັນການແພດ ເພື່ອຮັບໃຊ້ໃນໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 13 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

**ມາດຕາ 14: ນະໂຍບາຍຂອງລັດຕໍ່ການດຳເນີນກິດຈະການໂຮງໝໍເອກະຊົນ:**

ການປະຕິບັດນະໂຍບາຍຂອງລັດຕໍ່ການດຳເນີນກິດຈະການໂຮງໝໍເອກະຊົນ ແມ່ນປະຕິບັດຕາມ ມາດຕາ 14 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

## ໝວດທີ 4
## ການຂໍອະນຸຍາດດໍາເນີນກິດຈະການໂຮງໝໍເອກະຊົນ

**ມາດຕາ 15: ການດໍາເນີນກິດຈະການໂຮງໝໍເອກະຊົນ:**

ນອກຈາກການດໍາເນີນກິດຈະການໂຮງໝໍເອກະຊົນ ທີ່ກໍານົດໃນມາດຕາ 15 ຂອງດໍາລັດສະບັບ 151/ລບແລ້ວ, ການດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

1. ການລົງທຶນຂອງຕ່າງປະເທດ ສາມາດຮ່ວມທຶນຈົດທະບຽນຮ່ວມກັບ ບຸກຄົນ, ນິຕິບຸກຄົນ ພາຍໃນປະເທດ ເພື່ອຂໍອະນຸຍາດດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງມີອັດຕາສ່ວນການລົງທຶນຫຼາຍກວ່າ ສີ່ສິບເກົ້າ(49) ເປີເຊັນ ຂຶ້ນໄປ ຂອງທຶນທັງໝົດໃນການສ້າງຕັ້ງໂຮງໝໍເອກະຊົນ.
2. ກໍລະນີການລົງທຶນຂອງຕ່າງປະເທດດ້ວຍຮູບແບບສູນບໍລິການປິ່ນປົວສະເພາະວິຊາ ທີ່ມີລັກສະນະເປັນບູລິມະສິດຂອງຂະແໜງການສາທາລະນະສຸກ ເຊັ່ນ: ການປິ່ນປົວ ພະຍາດຫົວໃຈແລະເສັ້ນເລືອດ, ພະຍາດເລືອດ, ພະຍາດມະເຮັງ, ພະຍາດຕັບ, ພະຍາດໝາກໄຂ່ຫຼັງ, ພະຍາດລະບົບປະສາດແລະສະໝອງ, ການປິ່ນປົວສຸກເສີນ-ມໍລະສຸມ, ກະຊວງສາທາລະນະສຸກ ຈະພິຈາລະນາ ເປັນແຕ່ລະກໍລະນີ ຕາມຄວາມເໝາະສົມ.
3. ເງື່ອນໄຂແລະມາດຕະຖານຂອງໂຮງໝໍເອກະຊົນ:
   ຕ້ອງມີສະຖານທີ່ຕັ້ງຢ່າງເໝາະສົມ, ສິ່ງແວດລ້ອມທີ່ສວຍງາມ ປອດໂປ່ງ ຫ່າງຈາກບ້ານເຮືອນປະຊາຊົນ, ມີຮົ້ວ ຫຼື ກໍາແພງອ້ອມ, ມີສະຖານທີ່ຈອດລົດພຽງພໍສໍາລັບຜູ້ມາໃຊ້ບໍລິການ, ມີລະບົບທໍາລາຍສິ່ງເສດເຫຼືອ ແລະ ຮັບປະກັນລະບົບຖ່າຍເທນໍ້າເປື້ອນອອກຈາກໂຮງໝໍ ແລະ ຕ້ອງໄດ້ຮັບການກໍ່ສ້າງຖືກຕ້ອງ ຕາມ ມາດຕະຖານເຕັກນິກຂອງລະບົບການແພດ ໂດຍຜ່ານການລົງກວດກາ ແລະ ຢັ້ງຢືນ ຈາກ ກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ.
4. ການຂໍອະນຸຍາດດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງປະກອບເອກະສານ ດັ່ງນີ້:
   1) ເອກະສານຂໍຄໍາເຫັນກ່ຽວກັບຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຂອງກະຊວງອຸດສາຫະກໍາແລະການຄ້າ.
   2) ບົດສະເໜີໂຄງການສ້າງຕັ້ງໂຮງໝໍເອກະຊົນ(ຕາມແບບພິມຂອງກະຊວງສາທາລະນະສຸກ).
   3) ໃບຢັ້ງຢືນທີ່ຕັ້ງໂຮງໝໍເອກະຊົນຂອງອໍານາດການປົກຄອງທ້ອງຖິ່ນ.
   4) ເອກະສານເຫັນດີໃຫ້ປຸກສ້າງຂອງຂະແໜງຄຸ້ມຄອງເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ.
   5) ແຜນຜັງການກໍ່ສ້າງຂອງຕຶກອາຄານໂຮງໝໍທີ່ອອກແບບ ໂດຍ ສະຖາປານິກໂຮງໝໍສະເພາະ.
   6) ແຜນອຸປະກອນແລະຜະລິດຕະພັນການແພດທີ່ຈະນໍາເຂົ້າຮັບໃຊ້ໃນໂຮງໝໍເອກະຊົນ ຕ້ອງລະບຸລະອຽດ.
   7) ເອກະສານທັງໝົດທີ່ກ່າວມາຂ້າງເທິງນັ້ນຕ້ອງເປັນພາສາລາວ ແລະ ປະກອບເຂົ້າກັນເຮັດເປັນ 03 ເຫຼັ້ມ.
5. ເມື່ອໄດ້ຮັບການອະນຸຍາດເຫັນດີ ໃຫ້ລົງທຶນໃນກິດຈະການໂຮງໝໍເອກະຊົນ ຈາກ ກະຊວງສາທາລະນະສຸກແລ້ວ ຜູ້ກ່ຽວຕ້ອງໄດ້ດໍາເນີນເອກະສານຕາມຂັ້ນຕອນຂອງການລົງທຶນ ແລະ ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດ ຈາກ ພາກສ່ວນທີ່ກ່ຽວຂ້ອງແລ້ວ ພາຍໃນກໍານົດ ເກົ້າສິບ(90)ວັນ ຕ້ອງມີການເຄື່ອນໄຫວ ແລະ ດໍາເນີນການກໍ່ສ້າງໂຮງໝໍ ຕາມລະບຽບການ.

**ມາດຕາ 16: ການຍື່ນຄໍາຮ້ອງຂໍດໍາເນີນກິດຈະການໂຮງໝໍເອກະຊົນ:**

ນອກຈາກການຍື່ນຄໍາຮ້ອງຂໍດໍາເນີນກິດຈະການໂຮງໝໍເອກະຊົນ ທີ່ກໍານົດໃນມາດຕາ 16 ຂອງດໍາລັດສະບັບ 151/ລບແລ້ວ, ການຍື່ນຄໍາຮ້ອງຂໍດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມດັ່ງນີ້:

1. ການຍື່ນຄໍາຮ້ອງຂໍເປີດໂຮງໝໍເອກະຊົນ ເປັນທາງການ ຕ້ອງປະກອບເອກະສານ ມີດັ່ງນີ້:
   1) ຄໍາຮ້ອງຂໍສ້າງຕັ້ງ ແລະ ເຄື່ອນໄຫວບໍລິການໂຮງໝໍເອກະຊົນ(ຕາມແບບພິມຂອງກະຊວງສາທາລະນະສຸກ)
   2) ໂຄງຮ່າງກົງຈັກແລະການຈັດຕັ້ງຂອງໂຮງໝໍທີ່ຈະເປີດບໍລິການ.

3) ບັນຊີລາຍຊື່ບຸກຄະລາກອນ ແລະ ເອກະສານທີ່ກ່ຽວຂ້ອງດ້ານການສຶກສາ ແລະ ວິຊາຊີບຂອງແຕ່ລະຕໍາແໜ່ງງານ ພ້ອມ ໃບປະກອບວິຊາຊີບປິ່ນປົວ ທີ່ອອກໃຫ້ໂດຍກະຊວງສາທາລະນະສຸກ ທັງຄົນລາວ ແລະ ຄົນຕ່າງປະເທດ.
4) ບັນຊີລາຍຊື່ອຸປະກອນການແພດ ແລະ ເອກະສານທີ່ກ່ຽວຂ້ອງ ພ້ອມຮູບພາບ.
5) ໃບອະນຸຍາດເຫັນດີໃຫ້ລົງທຶນຂອງກະຊວງສາທາລະນະສຸກ.
6) ໃບທະບຽນວິສາຫະກິດ(ກະຊວງອຸດສາຫະກໍາແລະການຄ້າ)
7) ໃບຢັ້ງຢືນເສຍອາກອນ(ກະຊວງການເງິນ).
8) ໃບຢັ້ງຢືນສິ່ງແວດລ້ອມ(ກະຊວງຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ).
9) ສໍາເນົາບັດປະຈໍາຕົວ ຖ້າເປັນຄົນລາວ, ໜັງສືຜ່ານແດນ ຖ້າເປັນຄົນຕ່າງປະເທດ.
10) ໃບອະນຸຍາດປຸກສ້າງ(ພະແນກໂຍທາທິການແລະຂົນສົ່ງ).
11) ບັນດາເອກະສານຕ່າງໆທີ່ໄດ້ສະເໜີຂໍຈົດທະບຽນວິສາຫະກິດ(ອຸດສາຫະກໍາແລະການຄ້າ).
12) ເອກະສານທັງໝົດທີ່ກ່າວມາຂ້າງເທິງນັ້ນຕ້ອງເປັນພາສາລາວ ແລະ ປະກອບເຂົ້າກັນເຮັດເປັນສາມເຫຼັ້ມ.
13) ຮູບເຄິ່ງຄີງ ຂະໜາດ 3x4(ພື້ນຂາວ) ຈໍານວນ 03 ແຜ່ນ.
14) ບົດສະເໜີໂຄງການສ້າງຕັ້ງໂຮງໝໍເອກະຊົນ(ເບື້ອງຕົ້ນທີ່ສະເໜີມາ) 03 ເຫຼັ້ມ.

**ມາດຕາ 17: ການພິຈາລະນາ ແລະ ການອະນຸຍາດໃຫ້ດໍາເນີນກິດຈະການໂຮງໝໍເອກະຊົນ:**

ນອກຈາກການພິຈາລະນາແລະການອະນຸຍາດໃຫ້ດໍາເນີນກິດຈະການໂຮງໝໍເອກະຊົນ ທີ່ກໍານົດໃນມາດຕາ 17 ຂອງດໍາລັດສະບັບ 151/ລບແລ້ວ, ການພິຈາລະນາແລະການອະນຸຍາດໃຫ້ດໍາເນີນກິດຈະການໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

1. ກະຊວງສາທາລະນະສຸກ ເປັນຜູ້ຄົ້ນຄວ້າເອກະສານ ແລະ ສົມທົບກັບຄະນະກໍາມະການຂະແໜງການທີ່ກ່ຽວຂ້ອງ ລົງກວດກາຕົວຈິງຄວາມພ້ອມຂອງໂຮງໝໍເອກະຊົນ ແລ້ວຈະພິຈາລະນາ ສະເໜີຂໍການອະນຸມັດ ຕໍ່ ລັດຖະມົນຕີ ກະຊວງສາທາລະນະສຸກ ເຊັນອອກໃບອະນຸຍາດ ພາຍໃນເວລາ ສາມສິບ(30)ວັນ ນັບແຕ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ. ຖ້າມີບາງຈຸດທີ່ຄະນະກໍາມະການ ລົງປະເມີນ ແລະ ກວດກາ ຍັງເຫັນວ່າບໍ່ທັນພ້ອມ ໂຮງໝໍດັ່ງກ່າວຕ້ອງໄດ້ປັບປຸງ ແລະ ແກ້ໄຂ ພາຍໃນ ເກົ້າສິບ(90)ວັນ ແລ້ວຈຶ່ງແຈ້ງໃຫ້ກະຊວງສາທາລະນະສຸກ ລົງປະເມີນອີກຮອບໃໝ່.
2. ອາຍຸໃບອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວບໍລິການໂຮງໝໍເອກະຊົນ ທຸກປະເພດ, ລັກສະນະ ແລະ ຂັ້ນ ມີກໍານົດໄຊ້ໃດ້ເປັນເວລາ ຫ້າ(05)ປີ ແລະ ຈະຕໍ່ອາຍຸໃຫ້ແຕ່ຜູ້ທີ່ເຄື່ອນໄຫວຖືກຕ້ອງເທົ່ານັ້ນ. ຖ້າມີຈຸດປະສົງຢາກສືບຕໍ່ກິດຈະການຕ້ອງໄດ້ຍື່ນຄໍາຮ້ອງຂໍຕໍ່ກ່ອນ ຫົກ(06)ເດືອນ ກ່ອນໃບອະນຸຍາດເກົ່າຈະໝົດອາຍຸ. ຖ້າບໍ່ສາມາດຈະດໍາເນີນກິດຈະການຕໍ່ໄປໄດ້ດ້ວຍເຫດຜົນໃດກໍ່ຕາມ(ຢາກຢຸດເຊົາ ຫຼື ມີຈຸດປະສົງຈະມອບກິດຈະການໃຫ້ຄົນອື່ນ)ຕ້ອງແຈ້ງໃຫ້ ກະຊວງສາທາລະນະສຸກ ຮູ້ກ່ອນລ່ວງໜ້າ ຫົກ(06)ເດືອນ.
3. ສໍາລັບໂຮງໝໍເອກະຊົນ ທີ່ໄດ້ຮັບໃບອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວບໍລິການຜ່ານມາແລ້ວ, ກະຊວງສາທາລະນະສຸກ ຈະຕ້ອງໄດ້ກວດກາຄືນໃບອະນຸຍາດ ແລະ ຈະໄດ້ອອກໃບອະນຸຍາດສະບັບໃໝ່ໃຫ້ ເພື່ອປ່ຽນແທນໃບອະນຸຍາດສະບັບເກົ່າ ເພື່ອໃຫ້ສອດຄ່ອງຕາມຄໍາແນະນໍາສະບັບນີ້.
4. ການຂໍຕໍ່ອາຍຸໃບອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວບໍລິການໂຮງໝໍເອກະຊົນ ຕ້ອງປະກອບເອກະສານດັ່ງນີ້:
   1) ໃບອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວບໍລິການໂຮງໝໍເອກະຊົນ(ຕົ້ນສະບັບ) 1 ສະບັບ.
   2) ໃບຄໍາຮ້ອງຂຽນດ້ວຍຕົນເອງ(ຕາມແບບພິມຂອງກະຊວງສາທາລະນະສຸກ) 1 ສະບັບ.
   3) ໃບຢັ້ງຢືນທີ່ຕັ້ງຂອງໂຮງໝໍເອກະຊົນ 1 ສະບັບ.
   4) ແຜນທີ່ຕັ້ງໂຮງໝໍເອກະຊົນ 1 ສະບັບ.

5) ແຈ້ງບັນຊີອຸປະກອນການແພດ 1 ສະບັບ.

6) ແຈ້ງບັນຊີລາຍຊື່ບຸກຄະລາກອນ ແລະ ເອກະສານທີ່ກ່ຽວຂ້ອງດ້ານການສຶກສາ ແລະ ວິຊາຊີບແຕ່ລະຕຳແໜ່ງງານ ພ້ອມ ໃບປະກອບວິຊາຊີບປິ່ນປົວ ທີ່ອອກໃຫ້ ໂດຍ ກະຊວງສາທາລະນະສຸກ ຂອງແຕ່ລະຄົນ ທັງຄົນລາວ ແລະ ຕ່າງປະເທດ ຜູ້ລະ 1 ສະບັບ.

7) ຮູບເຄິ່ງຄີງ ຂະໜາດ 3x4(ພື້ນສີຂາວ) 2 ແຜ່ນ.

5. ການເກັບຄ່າທຳນຽມໃບອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວບໍລິການໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

## ໝວດທີ 5
## ການມອບໂອນ ແລະ ຍຸບເລີກໂຮງໝໍເອກະຊົນ

**ມາດຕາ 18: ການມອບໂອນກິດຈະການໂຮງໝໍເອກະຊົນ:**

ການມອບໂອນກິດຈະການໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 18 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

**ມາດຕາ 19: ການຍຸບເລີກໂຮງໝໍເອກະຊົນ:**

ການຍຸບເລີກໂຮງໝໍເອກະຊົນ ໃຫ້ປະຕິບັດຕາມ ມາດຕາ 19 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

## ໝວດທີ 6
## ມາດຕະການຈັດຕັ້ງປະຕິບັດຂອງໂຮງໝໍເອກະຊົນ

**ມາດຕາ 20: ການຄຸ້ມຄອງ ແລະ ກວດກາ ໂຮງໝໍເອກະຊົນ:**

ນອກຈາກການຄຸ້ມຄອງແລະກວດກາໂຮງໝໍເອກະຊົນ ທີ່ກຳນົດໃນມາດຕາ 20 ຂອງດຳລັດສະບັບ 151/ລບ ແລ້ວ, ການຄຸ້ມຄອງແລະກວດກາໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

1. ການບໍລິການພາຍໃນໂຮງໝໍເອກະຊົນ ທຸກເອກະສານທີ່ໃຊ້ຕ້ອງແມ່ນພາສາລາວເປັນຫຼັກ ເຊັ່ນ: ປຶ້ມຕິດຕາມຄົນເຈັບ, ໃບສັ່ງຢາ, ໃບສັ່ງກວດ, ໃບບົ່ງມະຕິພະຍາດ, ໃບວິເຄາະ, ລັງສີວິທະຍາ ແລະ ຮູບພາບການແພດ, ໃບລາຍງານຜົນຂອງການກວດ, ໃບຢັ້ງຢືນການແພດ ແລະ ອື່ນໆ.
2. ການເກັບຄ່າບໍລິການຂອງໂຮງໝໍເອກະຊົນ ຕ້ອງໄດ້ກຳນົດຄ່າບໍລິການຕ່າງໆ, ບໍ່ໃຫ້ເກັບແພງເກີນໄປ ພ້ອມຕິດຄ່າບໍລິການໄວ້ພາຍໃນໂຮງໝໍຢ່າງເປີດເຜີຍ.
3. ປ້າຍຂອງໂຮງໝໍເອກະຊົນ ຕ້ອງປະຕິບັດຕາມ ຮູບແບບ ຂອງກະຊວງສາທາລະນະສຸກ ກຳນົດໄວ້ ດັ່ງນີ້:
   - ພື້ນສີຂາວ
   - ຕົວໜັງສືສີຟ້າແກ່
   - ມີເຄື່ອງໝາຍກາໂຮງໝໍ
   - ຊື່ຂອງໂຮງໝໍ ພາສາລາວ ໃຫຍ່ກວ່າ ພາສາສາກົນ
   - ໃບອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວບໍລິການໂຮງໝໍເອກະຊົນ ເລກທີ...../ສທ, ລົງວັນທີ...
   - ປະເພດ, ລັກສະນະ, ຂັ້ນ
   - ໂທລະສັບ ແລະ ແຟັກ.

4. ການບໍລິການຂອງໂຮງໝໍເອກະຊົນ ທີ່ໄດ້ຮັບການອະນຸຍາດໃຫ້ດຳເນີນກິດຈະການບໍລິການໂຮງໝໍຈາກກະຊວງສາລະນະສຸກແລ້ວ ຫາກມີການເຄື່ອນໄຫວບໍ່ຖືກຕ້ອງ, ມີການລະເມີດຕໍ່ຄຳແນະນຳສະບັບນີ້ ຫຼື ເຮັດໃຫ້ເກີດມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໄດ້ຮັບການກວດກາຍັ້ງຢືນ ຈາກ ຂະແໜງການທີ່ກ່ຽວຂ້ອງ, ເຈົ້າຂອງໂຮງໝໍຕ້ອງໄດ້ແກ້ໄຂ ແລະໃຊ້ຄ່າເສັຍຫາຍທັງໝົດ, ກະຊວງສາທາລະນະສຸກ ຈະບໍ່ຕໍ່ອາຍຸໃບອະນຸຍາດສ້າງຕັ້ງໂຮງໝໍໃຫ້ຢ່າງເດັດຂາດ ພ້ອມ ປະຕິບັດມາດຕະການ ດັ່ງນີ້:
   - ຄັ້ງທີ 1. ໃຫ້ການແນະນຳ ແລະ ຂຽນບົດບັນທຶກຮ່ວມກັນ.
   - ຄັ້ງທີ 2. ປັບໃໝຕາມເງື່ອນໄຂ ແລະ ຂຽນບົດບັນທຶກຮ່ວມກັນ.
   - ຄັ້ງທີ 3. ສັ່ງປິດກິດຈະການ ແລະ ຂຽນບົດບັນທຶກຮ່ວມກັນ.
5. ການບໍລິການຂອງໂຮງໝໍເອກະຊົນແຫ່ງໃດ ທີ່ສ້າງຕັ້ງຂຶ້ນແລະເຄື່ອນໄຫວບໍລິການ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ກະຊວງສາທາລະນະສຸກ ຈະໄດ້ຖືກດຳເນີນຄະດີ ຕາມ ກົດໝາຍ ຂອງ ສປປ ລາວ ແລະ ໃຫ້ຢຸດການເຄື່ອນໄຫວທັນທີ.
6. ການໂຄສະນາຂອງໂຮງໝໍເອກະຊົນ ທຸກຮູບແບບ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ.
7. ເນື້ອໃນຂອງການໂຄສະນາ ແມ່ນອະນຸຍາດໃຫ້ແນະນຳໄດ້ແຕ່ສະຖານທີ່ຕັ້ງຂອງໂຮງໝໍ, ການຮັບບໍລິການສຸຂະພາບຢູ່ພາຍໃນໂຮງໝໍມີຫຍັງແດ່, ບໍ່ໃຫ້ເວົ້າເຖິງຄວາມສາມາດໃນການປິ່ນປົວພະຍາດ ແລະ ອຸປະກອນການແພດ ຫຼື ເທັກໂນໂລຊີທີ່ທັນສະໄໝ ລວມທັງ ບຸກຄາລະກອນການແພດທີ່ມີຄວາມຊຳນານງານຕ່າງໆ, ສຳລັບພາບເຄື່ອນໄຫວ ແມ່ນອະນຸຍາດຖ່າຍໄດ້ແຕ່ຕຶກອາຄານພາຍໃນ ແລະ ພາຍນອກ ເທົ່ານັ້ນ, ບໍ່ອະນຸຍາດໃຫ້ຖ່າຍພາບອຸປະກອນການແພດທຸກຊະນິດ ຫຼື ຮູບພາບທີ່ມີລັກສະນະດຶງດູດຄົນເຈັບໃຫ້ມາບໍລິການນຳໂຮງໝໍຂອງຕົນ ລວມທັງ ການປະຕິບັດໜ້າທີ່ຂອງແພດໝໍຕໍ່ກັບຄົນເຈັບ ຢ່າງເດັດຂາດ, ໄລຍະເວລາຂອງການລົງຂ່າວອອກຂ່າວຕ່າງໆ ຕ້ອງບໍ່ໃຫ້ກາຍ ຫົກສິບ(60)ວິນາທີ.
8. ລັດສົ່ງເສີມໃຫ້ທຸກໂຮງໝໍເອກະຊົນ ໂຄສະນາ ສຸຂະສຶກສາ ໃຫ້ຄວາມຮູ້ໃນເລື້ອງພະຍາດໃດໜຶ່ງ ຫຼື ການປ້ອງກັນພະຍາດຕ່າງໆໃຫ້ແກ່ປະຊາຊົນ.

**ມາດຕາ 21: ຂໍ້ຫ້າມສຳລັບການບໍລິການຂອງໂຮງໝໍເອກະຊົນ:**

ນອກຈາກຂໍ້ຫ້າມສຳລັບການບໍລິການຂອງໂຮງໝໍເອກະຊົນ ທີ່ກຳນົດໃນມາດຕາ 21 ຂອງດຳລັດສະບັບ 151/ລບແລ້ວ, ຂໍ້ຫ້າມຂອງໂຮງໝໍເອກະຊົນ ຕ້ອງໄດ້ປະຕິບັດຕາມລະບຽບການຕື່ມ ດັ່ງນີ້:

1. ການດຳເນີນກິດຈະການບໍລິການໂຮງໝໍເອກະຊົນ ສາມາດດຳເນີນໄດ້ພາຍໃນບໍລິເວນທີ່ຕັ້ງຂອງໂຮງໝໍທີ່ໄດ້ຮັບອະນຸຍາດ, ຫ້າມບໍ່ໃຫ້ຂະຫຍາຍສາຂາເປັນລັກສະນະຫ້ອງກວດພະຍາດ ຢູ່ ນອກສະຖານທີ່ຕັ້ງບ່ອນທີ່ຕົນໄດ້ຮັບອະນຸຍາດ ຢ່າງເດັດຂາດ.
2. ຫ້າມດຳເນີນການເຄື່ອນໄຫວການບໍລິການປະສົມພັນທຽມ ຢູ່ໃນໂຮງໝໍເອກະຊົນ ຢ່າງເດັດຂາດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງສາທາລະນະສຸກ.
3. ຫ້າມດຳເນີນການເຄື່ອນໄຫວບໍລິການເກີນຂອບເຂດສິດ ຕາມ ທີ່ໂຮງໝໍຕົນເອງໄດ້ຮັບອະນຸຍາດໃຫ້ລົງທຶນດຳເນີນກິດຈະການໂຮງໝໍເອກະຊົນ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 22: ເຄື່ອງໝາຍ ແລະ ກາປະທັບ:**

ເຄື່ອງໝາຍ ແລະ ກາປະທັບ ຂອງໂຮງໝໍເອກະຊົນ ແມ່ນໃຫ້ປະຕິບັດຕາມ ມາດຕາ 22 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

**ມາດຕາ 23: ການຈັດຕັ້ງປະຕິບັດ:**

ການຈັດຕັ້ງປະຕິບັດ ແມ່ນໃຫ້ປະຕິບັດຕາມ ມາດຕາ 23 ຂອງດຳລັດວ່າດ້ວຍໂຮງໝໍເອກະຊົນ.

**ມາດຕາ 24: ຜົນສັກສິດ:**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ຮສ ດຣ. ບຸນກອງ ສີຫາວົງ